ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ຫ້ອງການ

ເລກທີ: 08580 /ຍທຂ.ຫກ

ນະຄອນຫລວງວຽງຈັນ, ວັນທີ: 27 APR 2021

# ແຈ້ງການ

**ຮຽນ:** ບັນດາທ່ານ ຫົວໜ້າກົມ, ສະຖາບັນ ແລະ ກອງວິຊາການ ທີ່ນັບຖື.

**ເລື່ອງ:** ການຜັນຂະຫຍາຍແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ສະບັບເລກທີ 406/ນຍ, ລົງວັນທີ 26/04/2021.

- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 406/ຫສນຍ, ລົງວັນທີ 26/04/2021 ກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດ ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021.
- ອີງຕາມ ການຊີ້ນໍາຂອງທ່ານລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ຄັ້ງວັນທີ 26/04/2021.

ຫ້ອງການກະຊວງ ໂຍທາທິການ ແລະ ຂົນສົ່ງ ຖືເປັນກຽດແຈ້ງມາຍັງບັນດາກົມ, ສະຖາບັນ ແລະກອງວິຊາການ ເພື່ອຈັດຕັ້ງປະຕິບັດແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ສະບັບເລກທີ 406/ນຍ, ລົງວັນທີ 26/04/2021 ດັ່ງນີ້:

1. ໃຫ້ກົມຂົນສົ່ງ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະທ້ອງຖິ່ນ ສືບຕໍ່ອໍານວຍຄວາມສະດວກທັງຢູ່ສູນກາງ ແລະທ້ອງຖິ່ນໃນການນໍາເຂົ້າ-ສົ່ງອອກສິນຄ້າ ລະຫວ່າງປະເທດ ແລະພາຍໃນ ລະຫວ່າງແຂວງຕໍ່ແຂວງ, ເມືອງຕໍ່ເມືອງ ແລະບ້ານຕໍ່ບ້ານ ສືບຕໍ່ດໍາເນີນເປັນປົກກະຕິ ເພື່ອສະໜອງສິນຄ້າ ແລະສະບຽງອາຫານໃຫ້ສັງຄົມໄດ້ຢ່າງພຽງພໍ ຕາມຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ແລະແຈ້ງການຂອງກະຊວງໂຍທາທິການ ແລະຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23/04/2021; ໂດຍມອບໃຫ້ທ່ານ ລັນ ແສງອາພອນ ຮອງລັດຖະມົນຕີ ຊີ້ນໍາກົມຂົນສົ່ງ ໃນການອໍານວຍຄວາມສະດວກການຂົນສົ່ງສິນຄ້າໃຫ້ເປັນປົກກະຕິ.
2. ໃຫ້ບັນດາທ່ານຫົວໜ້າກົມ, ຫ້ອງການ, ສະຖາບັນ ແລະ ກອງວິຊາການ ແນະນໍາພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຮັດວຽກທາງລັດຖະການຢູ່ເຮືອນ ຫລື ທີ່ພັກອາໃສ ຜ່ານລະບົບການສື່ສານ ແລະເຄືອຂ່າຍອິນເຕີເນັດຕ່າງໆ, ໂດຍໃຫ້ສາມາດປະສານກັນໄດ້ຕະຫລອດເວລາ ໃນກໍລະນີມີວຽກຈໍາເປັນ ເພື່ອປ້ອງກັນບໍ່ໃຫ້ມີເຫດການຕ່າງໆທີ່ບໍ່ດີເກີດຂຶ້ນຢູ່ພາຍໃນກະຊວງ ຍທຂ ຢ່າງເດັດຂາດ.
3. ທຸກພາກສ່ວນທີ່ຂຶ້ນກັບ ກະຊວງ ໂຍທາທິການ ແລະ ຂົນສົ່ງ ພ້ອມກັນເປັນເຈົ້າການປະຕິບັດຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ລົງວັນທີ 21/4/2021 ແລະແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ສະບັບເລກທີ 406/ນຍ, ລົງວັນທີ 26/04/2021 ຢ່າງເຂັ້ມງວດ;

4. ແຈ້ງການສະບັບນີ້ ມີຜົນສັກສິດ ນັບວັນທີ 26/04/2021 ເປັນຕົ້ນໄປ ຈົນເຖິງເວລາ 24:00 ໂມງ ຂອງວັນທີ 05/05/2021; ໃນກໍລະນີ ທີ່ມີການປ່ຽນແປງ ແລະຊີ້ນໍາຈາກຂັ້ນເທິງ ຈະແຈ້ງໃຫ້ຊາບຕື່ມ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ປະຕິບັດເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ບຸນຈັນ ສິນທະວົງ

ບ່ອນນໍາສົ່ງ:

- ບັນດາທ່ານ ຮອງລັດຖະມົນຕີ ທ່ານລະ 01 ສະບັບ
- ບັນດາກົມ, ສະຖາບັນ ແລະກອງວິຊາການ ບ່ອນລະ 01 ສະບັບ
- ສໍານັກເກັບມ້ຽນ 01 ສະບັບ